ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..........000.........

ນະຄອນຫຼວງວຽງຈັນ

ເມືອງສີສັດຕະນາກ

ເລກທີ 014 /ຈມ.ສສນ

ລົງວັນທີ 12 JAN 2017

# ແຈ້ງການ

**ເຖິງ : ທ່ານ ຫົວໜ້າຫ້ອງການ, ອົງການຈັດຕັ້ງມະຫາຊົນ, ເລຂາ ພັກບ້ານ, ນາຍບ້ານ 37 ບ້ານ ປະຊາຊົນທຸກຊັ້ນຄົນພາຍໃນເມືອງ ສີສັດຕະນາກ**

**ເລື່ອງ : ການລົງເກັບກຳຂໍ້ມູນ ແລະ ເພື່ອປຸກລະດົມການເຮັດສັນຍາ ເກັບມ້ຽນຂີ້ເຫຍື້ອຄົວເຮືອນຂອງຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ.**

- ອີງຕາມ : ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສສປລາວ ສະບັບເລກທີ 68/ສພຊ,ລົງວັນທີ 14ທັນວາ2015 ໝວດ 4 ມາດຕາ 39-40 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ.
- ອີງໃສ່ : ມະຕິຕົກລົງ ສະບັບເລກທີ 03 / ອປຄ.ນວ, ລົງວັນທີ 25 ກັນຍາ 2015 , ກ່ຽວກັບແຜນວຽກ ແລະ ມາດຕະການຈັດຕັ້ງປະຕິບັດໂຄງການສະອາດໄລຍະສະເພາະໜ້າ ແລະຮອດປີ 2020.
- ອີງໃສ່ : ຂໍ້ຕົກລົງ ເລກທີ 1638 /ຄບຕ.ນວ,ລົງວັນທີ 28 ຕຸລາ 2016. ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບລົງເກັບກຳຂໍ້ມູນ ການເຮັດສັນຍາຂີ້ເຫຍື້ອ ຂອງແຕ່ລະບ້ານ ພາຍໃນນະຄອນຫຼວງວຽງຈັນ.
- ອີງໃສ່ : ບົດລາຍງານສະບັບເລກທີ 054 /ຄບຕ.ສສນ, ລົງວັນທີ 27 / 12 / 2016. ຂອງ ຄບຕ ເມືອງສີສັດຕະນາກ.

ເພື່ອເຮັດໃຫ້ເມືອງສີສັດຕະນາກ ມີຄວາມສະອາດຈົບງາມ, ມີການຄຸ້ມຄອງການບໍລິການເກັບມ້ຽນຂີ້ເຫຍື້ອໃຫ້ທົ່ວເຖິງທຸກໆອົງການຈັດຕັ້ງ, ທຸກຄອບຄົວ, ຫ້າງຮ້ານຕ່າງໆ, ມີຄວາມເປັນລະບຽບຮຽບຮ້ອຍ, ຫຼີກເວັ້ນການຖິ້ມຂີ້ເຫຍື້ອຊະຊາຍຕາມສະຖານທີ່ຕ່າງໆ.

**ເຈົ້າເມືອງສີສັດຕະນາກ** ຂໍຖືເປັນກຽດແຈ້ງການມາຍັງບັນດາທ່ານ ການຈັດຕັ້ງທຸກພາກສ່ວນ, ທ່ານເລຂາພັກບ້ານນາຍບ້ານ 37 ບ້ານ, ຕະຫຼອດຮອດຫົວໜ່ວຍທຸລະກິດ, ຫ້າງຮ້ານ, ຊາວຄ້າຂາຍປະຊາຊົນທຸກຊັ້ນຄົນພາຍໃນເມືອງ ສີສັດຕະນາກ. ຈົ່ງອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ແກ່ຄະນະທີມງານດັ່ງກ່າວ. ສຳລັບອົງການຈັດຕັ້ງ ແຕ່ລະບ້ານພາຍໃນເມືອງສີສັດຕະນາກ ແມ່ນໃຫ້ສົມທົບເຂົ້າຮ່ວມກັບຄະນະທີມງານພ້ອມກັນລົງກວດກາ ແລະ ເກັບກຳຂໍ້ມູນ, ການເກັບມ້ຽນຂີ້ເຫຍື້ອຂອງແຕ່ລະຄອບຄົວພາຍໃນຂອບເຂດບ້ານຂອງຕົນ, ພ້ອມທັງປຸກລະດົມພໍ່-ແມ່ປະຊາຊົນ, ຊາວຄ້າຂາຍ, ຫ້າງຮ້ານໃຫ້ຄວາມຮ່ວມມືເຮັດສັນຍາເກັບມ້ຽນຂີ້ເຫຍື້ອກັບຄະນະທີມງານນີ້ດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບັນດາທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ເຈົ້າເມືອງ ສີສັດຕະນາກ**

ໄພດາ ໄຊຍະສອນ